Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

**Swiss Agency for Development and Cooperation SDC**

# ແຜນການຮ່ວມມື ສະວິສ ໃນພາກພື້ນແມ່ນ້ຳຂອງ ປີ 2022-25

## ການປົກຄອງ ແລະ ການມີສ່ວນຮ່ວມຂອງພົນລະເມືອງ (GCP)

ແຜນງານ GCP ຈະນຳໃຊ້ວິທີການທີ່ອີງໃສ່ສິດທິເປັນຫຼັກ. ແຜນງານຈະສ້າງຄວາມເຂັ້ມແຂງ-ມອບອຳນາດໃຫ້ປະຊາຊົນໃຫ້ມີສ່ວນຮ່ວມໃນຂະບວນການວາງແຜນ ແລະ ຕັດສິນໃຈຢູ່ຂັ້ນທ້ອງຖິ່ນ ແລະ ສູນກາງ. ແຜນງານຈະສ້າງພື້ນທີ່ ແລະ ເວທີສຳລັບການແລກປ່ຽນຄວາມຄິດຄວາມເຫັນໃນທຸກໆຂັ້ນ, ໃຫ້ຜູ້ມີພາລະໜ້າທີ່ສະໜອງການບໍລິການ ແລະ ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງ ແລະ ໄດ້ຜົນປະໂຫຍດຈາກການບໍລິການຂອງລັດ. ແຜນງງານ GCP ຈະສືບຕໍ່ສົ່ງເສີມສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ອົງການຈັດຕັ້ງສັງຄົມພົນລະເຮືອນ ແລະ ສະໜັບສະໜູນພວກເຂົາໃນການປະຕິບັດໜ້າທີ່ຫຼັກໆໃນການຂັບຂວາຍເປັນກະບອກສຽງ ແລະ ການບໍລິການຕ່າງໆ. ໃນຂັ້ນທ້ອງຖິ່ນ, ແຜນງານຈະສືບຕໍ່ສະໜອງທຶນຮ່ວມກັນເຂົ້າໃນວຽກງານ ພື້ນຖານໂຄງລ່າງເພື່ອເສດຖະກິດ-ສັງຄົມ ແລະ ການພັດທະນາທີ່ນຳພາໂດຍຊຸມຊົນ.

**ຈຸດປະສົງ:** ປະຊາຊົນຢູ່ໃນພາກພື້ນແມ່ນ້ຳຂອງ ໂດຍສະເພາະຄົນໜຸ່ມ, ແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດຢູ່ກຳປູເຈຍ ແລະ ສປປ ລາວ ໄດ້ຮັບຜົນປະໂຫຍດຈາກ ການບໍລິການພາກລັດທີ່ຕອບສະໜອງຢ່າງທັນການ ແລະ ຕາມຄວາມຕ້ອງການຂອງພວກກຸ່ມ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າໃນຂະບວນການປົກຄອງຂັ້ນທ້ອງຖິ່ນ ແລະ ປະເທດ.

**ໝາກຜົນຈາກແຜນງານສະໜັບສະໜູນຂອງສະວິສ:**

ໝາກຜົນ 1: ປະຊາຊົນມີສ່ວນຮ່ວມຢ່າງມີປະສິດທິພາບໃນຂະບວນການວາງແຜນ ແລະ ການຕັດສິນໃຈໃນຂັ້ນທ້ອງຖິ່ນ ແລະ ປະເທດ.

ໝາກຜົນ 2: ສະຖາບັນຂອງລັດໃນທຸກໆຂັ້ນຕອບສະໜອງການບໍລິການ (ຂອງລັດ) ຢ່າງທັນການ ແລະ ຕາມຄວາມຕ້ອງການຂອງປະຊາຊົນ ລວມທັງການບໍລິການສຸຂະພາບຢູ່ກຳປູເຈຍໃນແບບທີ່ມີສ່ວນຮ່ວມ ແລະ ເປັນເຈົ້າການມີຄວາມຮັບຜິດຊອບ.

ໝາກຜົນ 3: ຜູ້ວາງນະໂຍບາຍ ແລະ ເຈົ້າໜ້າທີ່ລັດຖະບານທີ່ກ່ຽວຂ້ອງ ໄດ້ສ້າງນະໂຍບາຍ ແລະ ແຜນການແບບມີສ່ວນຮ່ວມ ແລະ ຕອບສະໜອງດ້ານບົດບາດຍິງຊາຍ ອີງຕາມຫຼັກຖານ ແລະ ການປຶກສາຫາລື ພ້ອມທັງຜັນຂະຫຍາຍຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

ງົບປະມານທີ່ຈັດສັນເຂົ້າໃສ່ແຜນງານ GCP ແມ່ນ CHF 40 ລ້ານຕະຫຼອດໄລຍະ MRCP ປີ 2022-25.

## ແຜນງານ ການພັດທະນາເສດຖະກິດແບບມີສ່ວນຮ່ວມ (IED)

ແຜນງານ IED ຈະສະໜັບສະໜູນວຽກງານລະຫວ່າງການພັດທະນາວິຊາຊີບສີມືແຮງງານ ແລະ ການສ້າງວຽກເຮັດງານທຳ ໂດຍສ້າງຄວາມເຂັ້ມແຂງດ້ານທັກສະສີມືແຮງງານ, ການຈ້າງງານ-ການມີວຽກເຮັດງານທຳ, ການສະໜັບສະໜູນການຈ້າງງານ, ການພັດທະນາການບໍລິການຂອງຈຸລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ. ສິ່ງນີ້ປະກອບສ່ວນຕໍ່ການສົ່ງເສີມ, ຮັກສາ, ສ້າງວຽກ ແລະ ການປະກອບການອິດສະຫຼະ ກໍຄື ຮັບປະກັນໃຫ້ປະຊາຊົນສາມາດເຂົ້າເຖິງຕະຫຼາດແຮງງານ ແລະ ຟື້ນຟູຈາກວິກິດການດ້ານເສດຖະກິດທີ່ເກີດຈາກໂຄວິດ-19. ແຜນງານສານຕໍ່ຈາກຄວາມເຂັ້ມແຂງຂອງການສະໜັບສະໜູນຜ່ານມາໃນຂັ້ນປະເທດ ແລະ ພາກພື້ນແມ່ນ້ຳຂອງ ເພື່ອກະຕຸ້ນການຈ້າງງານ ແລະ ປະກອບສ່ວນໃສ່ໂອກາດການເຄື່ອນຍ້າຍແຮງງານຂອງພາກພື້ນຢ່າງປອດໄພ ແລະ ວັດທະນາຖາວອນກວ່າເກົ່າ.

**ຈຸດປະສົງ:** ປະຊາຊົນໃນພາກພື້ນແມ່ນ້ຳຂອງ ໂດຍສະເພາະຄົນໜຸ່ມ, ແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດຢູ່ກຳປູເຈຍ ແລະ ສປປ ລາວ ໄດ້ວຽກເຮັດງານທຳທີ່ມີຄຸນນະພາບ ແລະ ລາຍໄດ້ດີກວ່າເກົ່າ ກໍຄືການມີຄວາມທົນທານຕໍ່ວິກິດດ້ານເສດຖະກິດດີກວ່າເກົ່າ.

**ໝາກຜົນຈາກແຜນງານສະໜັບສະໜູນຂອງສະວິສ:**

ໝາກຜົນ 1: ປະຊາຊົນໄດ້ມີການປັບປຸງທັກສະທີ່ດີຂຶ້ນ ແລະ ສາມາດຫາວຽກເຮັດງານທຳໄດ້ດີກວ່າເກົ່າ.

ໝາກຜົນ 2: ສະຖາບັນຂອງລັດ ແລະ ເອກະຊົນສະໜອງການພັດທະນາວິຊາຊີບສີມືແຮງງານທີ່ມີຄຸນນະພາບຫຼາຍກວ່າເກົ່າ, ການສະໜັບສະໜູນການຈ້າງງານ ແລະ ການບໍລິການພັດທະນາຫົວໜ່ວຍທຸລະກິດ.

ໝາກຜົນ 3: ອີງຕາມຫຼັກຖານ ແລະ ການປຶກສາຫາລືກັບຜູ້ມີສ່ວນຮ່ວມຫຼາຍຝ່າຍ, ຜູ້ວາງນະໂຍບາຍໄດ້ພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍທີ່ຕອບສະໜອງດ້ານບົດບາດຍິງ-ຊາຍ ແລະ ນະໂຍບາຍແບບມີສ່ວນຮ່ວມ ກ່ຽວກັບການພັດທະນາວິຊາຊີບສີມືແຮງງານ, ການພັດທະນາຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ-ກາງ ແລະ ການສ້າງວຽກເຮັດງານທຳທີ່ເປັນທຳມີກຽດ ຮ່ວມກັບພາກເອກະຊົນ ແລະ ອົງການເພື່ອສັງຄົມພົນລະເຮືອນ.

ງົບປະມານທີ່ຈັດສັນເຂົ້າແຜນງານ IED ແມ່ນ CHF 46 ລ້ານ ຕະຫຼອດໄລຍະຂອງ MRCP ປີ 2022-25.

## ແຜນງານສະໜັບສະໜູນ ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ (CCNRM)

ແຜນງານສະໜັບສະໜູນ CCNRM ຈະແກ້ໄຂບັນຫາທີ່ສະຫຼັບຊັບຊ້ອນດ້ວຍວິທີການຮ່ວມມືກັບຫຼາຍຂະແໜງການ. ແຜນງານຈະສ້າງຂີດຄວາມສາມາດຂອງພາກລັດ, ເອກະຊົນ ແລະ ອົງການສັງຄົມພົນລະເຮືອນ ຢູ່ລະດັບລຸ່ມປະເທດ, ປະເທດ ແລະ ພາກພື້ນ ກໍຄືແກ້ໄຂບັນຫາທີ່ກ່ຽວຂ້ອງກັບການປັບຕົວ ແລະ ຫລຸດຜ່ອນຜົນກະທົບ ຈາກການປ່ຽນແປງດິນຟ້າອາກາດ, ຄວາມທົນທານ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງຍືນຍົງ. ແຜນງານຈະສ້າງຫຼັກຖານທີ່ອີງໃສ່ການຄົ້ນຄວ້າ, ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຖືສິດ ແລະ ປ້ອນປະສົບການຕ່າງໆເຂົ້າໃນການປຶກສາຫາລືດ້ານນະໂຍບາຍ. ນອກຈາກນີ້, ກໍຈະເອື້ອອຳນວຍຂະບວນການສູ່ການຮັບຮອງມາດຕະຖານສາກົນ ແລະ ຫຼັກການດ້ານກະເສດ-ນິເວດວິທະຍາທີ່ໄດ້ພິສູດມາແລ້ວ ເພາະວ່າສິ່ງເຫຼົ່ານີ້ມີຄວາມສຳຄັນຕົ້ນຕໍໃນການຮັບປະກັນການເຂົ້າເຖິງຊັບພະຍາກອນທຳມະຊາດຢ່າງປອດໄພ ແລະ ຊີວິດການເປັນຢູ່ທີ່ຍືນຍົງ ຂອງຊາວກະສິກອນຂະໜາດນ້ອຍ ແລະ ປະຊາກອນໃນຊົນນະບົດ.

**ຈຸດປະສົງ:** ປະຊາຊົນຢູ່ພາກພື້ນແມ່ນ້ຳຂອງ ໂດຍສະເພາະຄົນໜຸ່ມ, ແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດຢູ່ກຳປູເຈຍ ແລະ ສປປ ລາວ ມີຄວາມທົນທານຫຼາຍກວ່າເກົ່າ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ສາມາດເຂົ້າເຖິງຊັບພະຍາກອນທຳມະຊາດ (ດິນ, ປ່າໄມ້ ແລະ ນ້ຳ) ຢ່າງປອດໄພ ແລະ ເທົ່າທຽມກວ່າເກົ່າ ກໍຄືສາມາດຄຸ້ມຄອງຊັບພະຍາກອນທຳມະຊາດດັ່ງກ່າວຢ່າງຍືນຍົງ.

**ໝາກຜົນຈາກແຜນງານສະໜັບສະໜູນຂອງສະວິສ:**

ໝາກຜົນ 1: ປະຊາຊົນມີຄວາມທົນທານຫຼາຍກວ່າເກົ່າ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ສາມາດເຂົ້າເຖິງຢ່າງໝັ້ນຄົງ ແລະ ປອດໄພ ແລະ ຄວບຄຸມຊັບພະຍາກອນທຳມະຊາດໄດ້ດີກວ່າເກົ່າ.

ໝາກຜົນ 2: ອົງການຈັດຕັ້ງພາກລັດ, ເອກະຊົນ ແລະ ອົງການສັງຄົມພົນລະເຮືອນ (ໂດຍສະເພາະ CBOs) ໃຫ້ການບໍລິການໃນການປັບຕົວ ແລະ ຫລຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ທີ່ຕອບສະໜອງຢ່າງທັນການ ແລະ ຕາມຄວາມຕ້ອງການໄດ້ດີກວ່າເກົ່າ ພ້ອມທັງການບໍລິການສະໜັບສະໜູນການຄຸ້ມຄອງຊັບພະຍາກອນທຳມະຊາດ.

ໝາກຜົນ 3: ຜູ້ວາງນະໂຍບາຍ ພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດ ແລະ ລະບຽບການທີ່ເພີ່ມການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນທຳມະຊາດຂອງປະຊາຊົນ ແລະ ປັບປຸງ ການປັບຕົວ ແລະ ຫລຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ.

ງົບປະມານທີ່ຈັດສັນເຂົ້າແຜນງານ CCNRM ແມ່ນ CHF 46.5 ລ້ານຕະຫຼອດໄລຍະຂອງ MRCP ປີ 2022-25.

## ບັນຫາທີ່ພົວພັນກັບຫຼາຍຂະແໜງການ

ໂຄງການ ແລະ ແຜນງານນຳໃຊ້-ຄຳນຶງເຖິງບັນຫາທີ່ພົວພັນກັບຫຼາຍຂະແໜງການຢ່າງສະໝ່ຳສະເໝີ ແລະ ຈະເປັນສ່ວນໜຶ່ງທີ່ສຳຄັນຂອງລະບົບການຕິດຕາມແຜນງານການຮ່ວມມື. MRCP ປີ 2022-25 ຂອງ ທຸກໆແຜນງານກິດຈະກຳຂອງສະວິສ ຈະສຸມໃສ່ 4 ບັນຫາທີ່ພົວພັນກັບຫຼາຍຂະແໜງການ.

**ຄວາມສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຂອງສັງຄົມ:** ຈະເນັ້ນໜັກເປັນພິເສດໃສ່ຄົນໜຸ່ມ, ແມ່ຍິງ ແລະ ບຸກຄົນດ້ອຍໂອກາດ ລວມທັງກຸ່ມຊົນເຜົ່າ ໃນການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນດ້ານເສດຖະກິດ ແລະ ທຳມະຊາດ ພ້ອມທັງ ການມີສ່ວນຮ່ວມຂອງພວກເຂົາເຈົ້າໃນການຕັດສິນໃຈກ່ຽວກັບການຄຸ້ມຄອງຊັບພະຍາກອນດັ່ງກ່າວ. ການສະໜັບສະໜູນຈະພະຍາຍາມຍົກສູງຄວາມສະເໝີພາບຍິງຊາຍ ແລະ ຄວາມຫຼາກຫຼາຍດ້ານຊົນເຜົ່າໃຫ້ຫຼາຍຂຶ້ນ ໃນການປຶກສາຫາລືກ່ຽວກັບນະໂຍບາຍ ແລະ ຜູ້ມີສ່ວນຮ່ວມ.

**ການປົກຄອງທີ່ດີ:** ການຄຸ້ມຄອງແຜນງານແບບວິທີທີ່ອີງໃສ່ສິດ ແລະ ການບໍລິຫານແຜນງານທີ່ອ່ອນໄຫວຕໍ່ຄວາມຂັດແຍ່ງ ແມ່ນຈຸດໃຈກາງໃນການປະຕິບັດງານຂອງການປົກຄອງທີ່ດີ. ການສະໜັບສະໜູນຈະສຸມໃສ່ເຮັດໃຫ້ຜູ້ຖືສິດ ຮ້ອງຂໍສິດຂອງພວກເຂົາຕໍ່ການບໍລິການຂັ້ນພື້ນຖານ, ການມີສ່ວນຮ່ວມດ້ານການເມືອງ, ເສດຖະກິດ ແລະ ຊັບພະຍາກອນທຳມະຊາດຢູ່ຂັ້ນທ້ອງຖິ່ນ, ປະເທດ ແລະ ລະຫວ່າງປະເທດ ຄຽງຄູ່ກັບການຮັດແໜ້ນຄວາມເຂັ້ມແຂງໃຫ້ແກ່ຜູ້ມີພາລະໜ້າທີ່ໃນການສະໜອງການບໍລິການທີ່ມີຄຸນນະພາບ ຢ່າງໂປ່ງໃສ ແລະ ເປັນເຈົ້າການມີຄວາມຮັບຜິດຊອບ.

**ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການຫລຸດຜ່ອນຄວາມສ່ຽງໄພພິບັດ (DRR):** ເພີ່ມຄວາມຮັບຮູ້ ແລະ ຄວາມອາດສາມາດໃນການປັບຕົວ ແລະ ການຫລຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ DRR ໃນທຸກໆຂັ້ນ ແລະ ໃນທຸກໆແຜນງານ, ເພື່ອຊີ້ນຳການຈັດຕັ້ງປະຕິບັດແຜນງານທີ່ກວມເອົາຫຼາຍຂະແໜງການ ແລະ ຮັບປະກັນຄວາມທົນທານຂອງປະຊາກອນ ກໍຄື ຄວາມຍືນຍົງຂອງໝາກຜົນ. ບັນຫາກ່ຽວກັບການປ່ຽນແປງດິນຟ້າອາກາດ ຈະຖືກນຳໄປເພື່ອການປຶກສາຫາລືດ້ານນະໂຍບາຍ ແລະ ກັບຜູ້ມີສ່ວນຮ່ວມ ທີ່ກ່ຽວຂ້ອງກັບການພັດທະນາເສດຖະກິດ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການໃຫ້ບໍລິການດ້ານການປົກຄອງ.

**ສະໜັບສະໜູນການຟື້ນຟູຈາກໂຄວິດ-19:** ທຸກໆກິດຈະກຳໃນແຜນງານ ຈະປະກອບສ່ວນຕໍ່ການຟື້ນຟູເສດຖະກິດ-ສັງຄົມທີ່ມີສ່ວນຮ່ວມຂອງປະຊາກອນກຸ່ມເປົ້າໝາຍ ແລະ ທັງປະເທດໂດຍລວມ.



Food and Beverage Training Class in Siem Reap Province, Cambodia. Photo © Swisscontact



## SDC ໃນພາກພື້ນແມ່ນ້ຳຂອງ

ອົງການພັດທະນາ ແລະ ການຮ່ວມມືສະວິສ (SDC) ແມ່ນອົງການຮ່ວມມືສາກົນຂອງສະວິສເຊີແລນ ພາຍໃຕ້ການຄຸ້ມຄອງຂອງກະຊວງການຕ່າງປະເທດແຫ່ງສະຫະພັນທະລັດສະວິສເຊີແລນ. ໂດຍການປະສານສົມທົບກັບຫ້ອງການອື່ນໆຂອງສະຫະພັນ, SDC ມີຄວາມຮັບຜິດຊອບປະສານງານໃນການຮ່ວມມືດ້ານການພັດທະນາ ແລະ ການຊ່ວຍເຫຼືອດ້ານມະນຸດສະທຳຂອງ ສະຫະພັນທະລັດສະວິສ.

SDC ໄດ້ສະໜັບສະໜູນໂຄງການພັດທະນາຢູ່ໃນພາກພື້ນແມ່ນ້ຳຂອງຕັ້ງແຕ່ຊຸມປີ 1990 ໂດຍໄດ້ເປີດ ຫ້ອງການຮ່ວມມືຂອງສະວິສ ແຫ່ງທຳອິດຢູ່ ຮ່າໂນ້ຍ ປີ 1992.ໃນປີ 2006, SDC ໄດ້ເປີດຫ້ອງການຮ່ວມມືຢູ່ ວຽງຈັນ ເພື່ອຄຸ້ມຄອງ ການເຄື່ອນໄຫວຮ່ວມມືດ້ານການພັດທະນາຂອງ ສະວິສເຊີແລນ ຢູ່ ສປປ ລາວ ເຊິ່ງຕາມມາດ້ວຍການເປີດຫ້ອງການຮ່ວມມືຢູ່ ພະນົມເປັນ ໃນປີ 2012.

ໃນຖານະຜູ້ມີບົດບາດມາຍາວນານຢູ່ໃນພາກພື້ນແມ່ນ້ຳຂອງ, SDC ແນໃສ່ຫລຸດຜ່ອນຄວາມທຸກຍາກ, ສະໜັບສະໜູນການພັດທະນາຢ່າງເທົ່າທຽມ ແລະ ຍືນຍົງ, ແລະ ສົ່ງເສີມ ການປົກຄອງແບບມີສ່ວນຮ່ວມ ແລະ ປະຊາທິປະໄຕ. SDC ສະໜັບສະໜູນລັດຖະບານ ແລະ ພາກສ່ວນທີ່ບໍ່ແມ່ນລັດຖະບານໃຫ້ກາຍເປັນຄູ່ຮ່ວມງານທີ່ມີຄວາມສະເໝີພາບ ແລະ ເຂັ້ມແຂງພາຍໃນພາກພື້ນແມ່ນ້ຳຂອງ.

ອົງການຮ່ວມມືສາກົນຂອງສະວິສ ຢູ່ໃນພາກພື້ນແມ່ນ້ຳຂອງ ປະກອບດ້ວຍ ກຳປູເຈຍ, ສປປ ລາວ, ມຽນມາ, ຫວຽດນາມ ແລະ ໄທ (ປະເທດ CLMVT) ແລະ ສຸມກິດຈະກຳໃສ່ ກຳປູເຈຍ ແລະ ສປປ ລາວ ເຊິ່ງລວມມີ ໂຄງການທີ່ກວມເອົາພາກພື້ນແມ່ນ້ຳຂອງໂດຍລວມ.

ວິໄສທັດດ້ານຍຸດທະສາດນີ້ສະທ້ອນ ແລະ ສອດຄ່ອງກັບການເພິ່ງພາອາໄສກັນດ້ານເສດຖະກິດ, ການເມືອງ ແລະ ສັງຄົມໃນພາກພື້ນແມ່ນ້ຳຂອງ ເຊິ່ງ ມີຊັບພະຍາກອນທຳມະຊາດທີ່ອຸດົມຮັ່ງມີ, ມີທ່າແຮງໃນການສ້າງໂອກາດເພື່ອການພັດທະນາດ້ານເສດຖະກິດທີ່ຍືນຍົງ ແລະ ປະຊາກອນໜຸ່ມນ້ອຍຜູ້ທີ່ມີຄວາມຮູ້ຄວາມຊຳນານດ້ານດີຈີຕອນນັບມື້ເພີ່ມຂຶ້ນເພື່ອປະກອບສ່ວນຕໍ່ການພັດທະນາຢ່າງມີສ່ວນຮ່ວມ.

ໂຄງການ-ແຜນງານໃນເຂດຊົນນະບົດແມ່ນມີບົດບາດເຂັ້ມແຂງ ພ້ອມທັງນັບມື້ ເຂົ້າໄປມີສ່ວນຮ່ວມເພີ່ມຂຶ້ນໃນຊົນນະບົດ-ຕົວເມືອງ ເນື່ອງຈາກວ່າມີແນວໂນ້ມການຫັນເປັນຕົວເມືອງເພີ່ມຂຶ້ນຢູ່ໃນພາກພື້ນ.

ແຜນງານຂອງ SDC ໃນພາກພື້ນແມ່ນ້ຳຂອງ ແມ່ນຄຸ້ມຄອງໂດຍ ຫ້ອງການຮ່ວມມືສະວິສ ຢູ່ ສປປ ລາວ (ນຳພາຫຼັກ) ແລະ ກຳປູເຈຍ ໂດຍການສົມທົບຢ່າງໃກ້ຊິດກັບ ສູນຊ່ວຍເຫຼືອດ້ານມະນຸດສະທຳພາກພື້ນຂອງ SDC ຢູ່ ບາງກອກ ແລະ ແຜນງານໂລກກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ສິ່ງແວດລ້ອມ, ນ້ຳ, ການຄ້ຳປະກັນດ້ານສະບຽງອາຫານ, ພ້ອມທັງການເຄື່ອນຍ້າຍ ແລະ ການພັດທະນາ.

ສະວິສ ເປັນຄູ່ຮ່ວມພັດທະນາສອງຝ່າຍຂະໜາດກາງ ຢູ່ ກຳປູເຈຍ ແລະ ສປປ ລາວ. ໃນສອງປະເທດນີ້ກໍໄດ້ມີສ່ວນຮ່ວມກັບແຜນງານຂອງສະຫະພາບເອີຣົບ ແລະ ສ້າງການເປັນຄູ່ຮ່ວມງານກັບ ສະຖາບັນການເງິນສາກົນ ກໍຄື ລະບົບເຄືອຂາຍຂອງສະຫະປະຊາຊາດ.

## ແຜນງານຂອງ SDC ໃນປີ 2018-21

### ຜົນໄດ້ຮັບປີ 2018-21

ເປົ້າໝາຍລວມຂອງ ຍຸດທະສາດການຮ່ວມມືໃນພາກພື້ນແມ່ນ້ຳຂອງປີ 2018-21 ແມ່ນເພື່ອປະກອບສ່ວນ ສ້າງສັງຄົມທີ່ມີສ່ວນຮ່ວມຢ່າງທົ່ວເຖິງຜ່ານການພັດທະນາຢ່າງສະເໝີພາບ ແລະ ຍືນຍົງ ກໍຄື ການປົກຄອງແບບປະຊາທິປະໄຕ. ເປົ້າໝາຍນີ້ ສາມາດບັນລຸໄດ້ດ້ວຍການສ້າງໂຄງການ ແລະ ຂອບຜົນໄດ້ຮັບ ຢູ່ ກຳປູເຈຍ, ສປປ ລາວ ແລະ ໃນລະດັບພາກພື້ນແມ່ນ້ຳຂອງຜ່ານ 3 ຂະແໜງການສະໜັບສະໜູນຄື: ການປົກຄອງ ແລະ ການມີສ່ວນຮ່ວມຂອງພົນລະເມືອງ (GCP), ການພັດທະນາທັກສະສີມືແຮງງານ ແລະ ການຈ້າງງານ (SDE) ແລະ ກະສິກຳ, ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ (AFS).

ງົບປະມານຕະຫຼອດໄລຍະຂອງຍຸດທະສາດແມ່ນ CHF 146 ລ້ານ ສຳລັບໃຊ້ຈ່າຍເຂົ້າໃນ 26 ໂຄງການພັດທະນາຂະໜາດໃຫຍ່ຂຶ້ນກວ່າເກົ່າ.

**ລະດັບຂະແໜງການສະໜັບສະໜູນ:**

› ບັນດາແຜນງານ GCP ໄດ້ປະກອບສ່ວນຕໍ່ການເຂົ້າເຖິງ ແລະ ການການນຳໃຊ້ການບໍລິການພາກລັດທີ່ເພີ່ມຂຶ້ນ ສຳລັບ ຫຼາຍກວ່າ 1.9 ລ້ານຄົນ ຫຼື ປະມານ 8% ຂອງປະຊາກອນໃນ ສປປ ລາວ ແລະ ກຳປູເຈຍ ລວມເຂົ້າກັນ.

› ບັນດາແຜນງານ AFS ໄດ້ປະກອບສ່ວນເພີ່ມການຄວບຄຸມຊັບພະຍາກອນປ່າໄມ້ປະມານ 1.8 ລ້ານຄົວເຮືອນ (ຫຼາຍກວ່າ 30% ຂອງປະຊາກອນໃນ ສປປ ລາວ ແລະ ກຳປູເຈຍ) ແລະ ລາຍໄດ້ທີ່ເພີ່ມຂຶ້ນ ແລະ ການຄ້ຳປະກັນດ້ານສະບຽງອາຫານ ສຳລັບຊາວກະສິກອນຂະໜາດນ້ອຍຫຼາຍກວ່າ 100,000 ຄົນ.

**ລະດັບສະຖາບັນ:**

› ບັນດາແຜນງານ SDE ໄດ້ສະໜັບສະໜູນການສ້າງຂີດຄວາມສາມາດຂອງພະນັກງານລັດຖະບານ ແລະ ຄູຫຼາຍກວ່າ 1,600 ທ່ານ ແລະ ໄດ້ເອື້ອອຳນວຍໃຫ້ແກ່ການເຮັດສັນຍາ ຫຼາຍກວ່າ 650 ສະບັບກັບພາກເອກະຊົນ ເພື່ອການປະສານສົມທົບຄວາມພະຍາຍາມການພັດທະນາແບບມີສ່ວນຮ່ວມຢ່າງທົ່ວເຖິງກວ່າເກົ່າ.

› ບັນດາແຜນງານ AFS ໄດ້ຮັດແໜ້ນຄວາມສາມາດຂອງຄູໃຫ້ເຂັ້ມແຂງຂຶ້ນ ຢູ່ ວິທະຍາໄລກະສິກຳ 5 ແຫ່ງ ແລະ ໄດ້ສະໜັບສະໜູນອຳນາດການປົກຄອງຂັ້ນແຂວງ 13 ແຫ່ງ ໃນການນຳໃຊ້ຂະບວນການ ແລະ ເຄື່ອງມືຕ່າງໆໃນການວາງແຜນທີ່ດິນຊຸມຊົນ ໃຫ້ໄດ້ດີກວ່າເກົ່າ.

**ລະດັບນະໂຍບາຍ:**

› ບັນດາແຜນງານ GCP ໄດ້ປະກອບສ່ວນຕໍ່ການວາງນະໂຍບາຍທີ່ອີງໃສ່ຫຼັກຖານ ແລະ ແບບມີສ່ວນຮ່ວມກວ່າເກົ່າ ຜ່ານການ ແນະນຳ-ນຳໃຊ້ກົນໄກເພື່ອປັບປຸງການເຂົ້າເຖິງຂໍ້ມູນດ້ານເສດຖະກິດ-ສັງຄົມ, ຄວາມເປັນເຈົ້າການ-ມີຄວາມຮັບຜິດຊອບ, ຄວາມໂປ່ງໃສ ແລະ ຜ່ານການຮັກສາພື້ນທີ່ຈຳນວນໜຶ່ງສຳລັບ ອົງການສັງຄົມພົນລະເຮືອນ.

› ບັນດາແຜນງານ SDE ໄດ້ປະກອບສ່ວນຕໍ່ການພັດທະນານະໂຍບາຍ ແລະ ຂອບກຳນົດຕ່າງໆ (ເຊັ່ນ: ກົດໝາຍວ່າດ້ວຍອາຊີວະສຶກສາ ແລະ ການຝຶກອົບຮົມໃນ ສປປ ລາວ, ລະບົບການຮັບຮູ້ລະດັບກ່ອນການຮຽນຮູ້ ຢູ່ ກຳປູເຈຍ).

**ລະດັບພາກພື້ນ:**

ຜ່ານແຜນງານຕ່າງໆລວມທັງ ໂຄງການຄຸ້ມຄອງທີ່ດິນພາກພື້ນແມ່ນ້ຳຂອງ, ອົງການແມ່ນ້ຳຂອງ ແລະ ແຜນງານແຮງງານເຄື່ອນຍ້າຍພາກພື້ນນັ້ນ, ສະວິສ ໄດ້ປະກອບສ່ວນຕໍ່ການກະກຽມ ແລະ ຮັບຮອງ ຄູ່ມືແນະນຳ ແລະ ນະໂຍບາຍລະດັບພາກພື້ນ ເປັນຕົ້ນທີ່ກ່ຽວກັບການຄຸ້ມຄອງນ້ຳ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ ແລະ ການຄຸ້ມຄອງທີ່ດິນ ແລະ ປ່າໄມ້.

ແຜນງານຂ້າງເທິງນີ້ໄດ້ຊີ້ໃຫ້ເຫັນຢ່າງຊັດເຈນວ່າ ໃນຂະນະທີ່ຊາດ-ລັດຮັກສາຫຼັກການເປັນຜູ້ຈັດຕັ້ງຫຼັກຢູ່ພາກພື້ນອາຊີຕາເວັນອອກສ່ຽງໃຕ້, ແຕ່ກໍຍັງມີ ໂຄງການພາກພື້ນຂອງສະຖາບັນທີ່ໜ້າເຊື່ອຖື ເຊັ່ນອາຊຽນ ແລະ ອົງການແມ່ນ້ຳຂອງ ທີ່ໄດ້ເພີ່ມຄຸນຄ່າ ເພາະວ່າ ສະຖາບັນເຫຼົ່ານີ້ສາມາດວາງມາດຕະຖານ ແລະ ສົ່ງເສີມການຮຽນຮູ້ເຊິ່ງກັນ ແລະ ກັນ.

## ແຜນງານຂອງ SDC ໃນປີ 2022-25

ພາກພື້ນໄດ້ບັນລຸອັດຕາການເຕີບໂຕດ້ານເສດຖະກິດທີ່ເປັນ ໜ້າປະທັບໃຈ ແລະ ໄດ້ມີຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກໃນສອງທົດສະວັດຜ່ານມາ. ແຕ່ວ່າ, ໃນປັດຈຸບັນ ປະເທດ CLMVT ກຳລັງປະເຊີນກັບສິ່ງທ້າທາຍຕ່າງໆທີ່ກະທົບໂດຍກົງຕໍ່ ຄວາມຈະເລີນຮຸ່ງເຮືອງ ແລະ ການພັດທະນາແບບມີສ່ວນຮ່ວມ ແລະ ຍືນຍົງຂອງພາກພື້ນ.

ບູລິມະສິດ ແລະ ເປົ້າໝາຍຂອງແຜນງານຮ່ວມມືໃນພາກພື້ນແມ່ນ້ຳຂອງ (MRCP) ປີ 2022-25 ແມ່ນແນໃສ່ ວາລະການພັດທະນາແບບຍືນຍົງ 2030, ຍຸດທະສາດການຮ່ວມມືສາກົນຂອງສະວິສ 2021-24 ແລະ ຂອບການພັດທະນາຫຼັກລະດັບພາກພື້ນ ແລະ ລະດັບປະເທດ. ບູລິມະສິດ ແລະ ເປົ້າ ໝາຍດັ່ງກ່າວສ້າງຂຶ້ນຈາກ ກາລະໂອກາດຂອງພາກພື້ນທີ່ມີການເຊື່ອມໂຍງທີ່ເຂັ້ມແຂງດ້ານເສດຖະກິດ, ການເມືອງ ແລະ ສັງຄົມ, ຈາກຄວາມອຸດົມຮັ່ງມີດ້ານຊັບພະຍາກອນທຳມະຊາດທີ່ສ້າງໂອກາດເພື່ອການພັດທະນາເສດຖະກິດທີ່ຍືນຍົງ ແລະ ຈາກການມີປະຊາກອນໜຸ່ມນ້ອຍຜູ້ທີ່ມີຄວາມຮູ້ຄວາມຊຳນານດ້ານດີຈີຕອນນັບມື້ເພີ່ມຂຶ້ນໃນການພັດທະນາຢ່າງສົມບູນ.

MRCP ມີເປົ້າໝາຍໃນການແກ້ໄຂສິ່ງທ້າທາຍຫຼັກ ຄື ການມີສ່ວນຮ່ວມທີ່ຈຳກັດຂອງກຸ່ມຜູ້ດ້ອຍໂອກາດໃນການພັດທະນາ ແລະ ໃນຂະບວນການຕັດສິນໃຈ, ການຂາດການແບ່ງປັນຄວາມອຸດົມຮັ່ງມີສຳລັບ ຄົນຈຳນວນຫຼາຍໃນສະພາບການລະບາດຂອງພະຍາດໂຄວິດ-19 ແລະ ຄວາມທົນທານທີ່ຈຳກັດຕໍ່ ວິກິດດ້ານເສດຖະກິດສັງຄົມ ແລະ ຕໍ່ກັບຜົນກະທົບທີ່ເກີດຈາກການປ່ຽນແປງດິນຟ້າອາກາດ.

ສະວິສ ຍັງຈະຮັກສາບົດບາດສຳຄັນໃນການທົດລອງວິທີການທີ່ເປັນນະວັດຕະກຳ ເຂົ້າໃນການພັດທະນາເສດຖະກິດແບບມີສ່ວນຮ່ວມ (IED), ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ (CCNRM) ແລະ ການປົກຄອງ ແລະ ການມີສ່ວນຮ່ວມຂອງພົນລະເມືອງ (GCP). ສະວິສ ໄດ້ພິສູດໃຫ້ເຫັນວ່າຕົນສາມາດມີວິທີການຂົນຂວາຍແຕ່ຂັ້ນລຸ່ມຫາເທິງ ແລະ ການເຂົ້າເຖິງກຸ່ມເປົ້າໝາຍທີ່ດ້ອຍໂອກາດຜ່ານການສ້າງຂີດຄວາມອາດສາມາດຂອງສະຖາບັນ ແລະ ບຸກຄົນ, ຜ່ານພື້ນທີ່ ແລະ ເວທີແລກປ່ຽນຄວາມເຫັນ, ການປຶກສາຫາລື ແລະ ປະສານສົມທົບໃນຂັ້ນລຸ່ມປະເທດ, ຂັ້ນປະເທດ ແລະ ພາກພື້ນໃນຂະນະທີ່ສາມາດຍຶດຖືຫຼັກການຫຼັກຂອງການປົກຄອງທີ່ດີ, ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງສັງຄົມຢ່າງທົ່ວເຖິງ ເຊິ່ງທັງໝົດນັ້ນ ຈະສືບຕໍ່ເປັນຈຸດໃຈກາງຂອງການຮ່ວມມືເພື່ອການພັດທະນາໃນພາກພື້ນຂອງຕົນ.

ສະນັ້ນ, ເປົ້າໝາຍລວມຂອງ MRCP ແມ່ນເພື່ອ 'ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ, ໂດຍສະເພາະຄົນໜຸ່ມ, ແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດໃນ ກຳປູເຈຍ, ສປປ ລາວ ແລະ ພາກພື້ນແມ່ນ້ຳຂອງ ໃຫ້ອຸດົມຮັ່ງມີ, ທົນທານ ແລະ ມີສ່ວນຮ່ວມໃນຂະບວນການພັດທະນາຫຼາຍກວ່າເກົ່າ.

SDC ໃນພາກພື້ນແມ່ນ້ຳຂອງ ຈະຈັດຕັ້ງປະຕິບັດໂຄງການໃນສາມຂະແໜງການຫຼັກຄື:

- ການປົກຄອງ ແລະ ການມີສ່ວນຮ່ວມຂອງພົນລະເມືອງ
- ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ
- ການພັດທະນາເສດຖະກິດແບບມີສ່ວນຮ່ວມ

ຂະແໜງການທີ່ພົວພັນກັບທຸກໆແຜນງານ:

- ຄວາມສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຢ່າງທົ່ວເຖິງຂອງສັງຄົມ
- ການປົກຄອງທີ່ດີ
- ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ
- ການຟື້ນຟູຈາກ ໂຄວິດ-19

ເພື່ອເຕີມເຕັມກັບ ແຜນງານໃນຂະແໜງການຂ້າງເທິງນັ້ນ ແມ່ນຈະມີການສະໜັບສະໜູນແບບມີເປົ້າໝາຍ ເຂົ້າໃນກິດຈະກຳດ້ານວັດທະນະທຳ ທີ່ສອດຄ່ອງກັບນະໂຍບາຍດ້ານວັດທະນະທຳ ແລະ ການພັດທະນາຂອງ SDC.

### ງົບປະມານປີ 2022-25

ງົບປະມານລວມຂອງ MRCP ແມ່ນ CHF 133.7 ລ້ານ ເຊິ່ງໃນນັ້ນ CHF 46 ລ້ານ ແມ່ນຈັດສັນເຂົ້າ IED, CHF 46.5 ລ້ານເຂົ້າໃສ່ CCNRM, ແລະ CHF 40 ລ້ານເຂົ້າໃສ່ແຜນງານ GCP ແລະ CHF 1.2 ລ້ານ ເຂົ້າໃສ່ ໝາກຜົນ ແລະ ກິດຈະກຳອື່ນໆ.

ງົບປະມານທີ່ຈັດສັນຕາມຂົງເຂດມີຄື: CHF 59 ລ້ານ ໃຫ້ແກ່ ສປປ ລາວ, CHF 46.5 ລ້ານ ໃຫ້ແກ່ກຳປູເຈຍ ແລະ CHF 28.2 ລ້ານໃຫ້ແກ່ໂຄງການລະດັບພາກພື້ນ.


**ຫ້ອງການຜູ້ຕາງໜ້າສະວິສ:**

**Swiss Cooperation Office and Consular Agency in Cambodia**
#50, Street 334,
Boeung Keng Kang 1 / Khan Boeung Keng Kang,
Phnom Penh, Cambodia
Tel: +855 23 218 305 / 218 209
Email: phnompenh@eda.admin.ch

**ຫ້ອງການຮ່ວມມື ແລະ ກົງສູນ ສະວິສ ປະຈຳ ສປປ ລາວ**
192/1 ຖະໜົນສີບຸນເຮືອງ,
ບ້ານສີບຸນເຮືອງ, ເມືອງຈັນທະບູລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 251 794
ອີເມລ: vientiane@eda.admin.ch